ຫ້ອງການຄະນະໂຄສະນາອົບຮົມ
ສູນກາງພັກ
ຂາເຂົ້າ ເລກທີ 345/
ວັນທີ 3/4/23

ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ຄະນະກວດກາສູນກາງພັກ ເລກທີ 74 /ຄກສພ

ນະຄອນຫຼວງວຽງຈັນ, ວັນທີ 27 ມີນາ 2023

# ຄຳແນະນຳ
## ກ່ຽວກັບການກະກຽມດຳເນີນຊີວິດການເມືອງກາງສະໄໝ ຂອງຄະນະບໍລິຫານງານພັກແຕ່ລະຂັ້ນ

- ອີງຕາມ ກົດລະບຽບຂອງພັກ ປະຊາຊົນປະຕິວັດລາວ ສະໄໝທີ XI.
- ອີງຕາມ ມະຕິຕົກລົງຂອງກົມການເມືອງສູນກາງພັກ ສະບັບເລກທີ 03/ກມສພ, ລົງວັນທີ 19 ມັງກອນ 2022 ວ່າດ້ວຍການຈັດຕັ້ງ ແລະ ການເຄື່ອນໄຫວຂອງຄະນະກວດກາສູນກາງພັກ.
- ອີງຕາມ ຄຳສັ່ງຂອງຄະນະເລຂາທິການສູນກາງພັກ ສະບັບເລກທີ 268/ຄລສພ, ລົງວັນທີ 20 ມັງກອນ 2023 ວ່າດ້ວຍການດຳເນີນກອງປະຊຸມຄົບຄະນະກາງສະໄໝ ຂອງຄະນະບໍລິຫານງານພັກແຕ່ລະຂັ້ນ.

ເພື່ອຜັນຂະຫຍາຍ ແລະ ຈັດຕັ້ງປະຕິບັດເນື້ອໃນຄຳສັ່ງ ຂອງຄະນະເລຂາທິການສູນກາງພັກ ສະບັບເລກທີ 268/ຄລສພ, ລົງວັນທີ 20 ມັງກອນ 2023 ໃຫ້ຖືກຕ້ອງ ແລະ ມີຄວາມເປັນເອກະພາບໃນທົ່ວພັກ, ຄະນະກວດກາສູນກາງພັກ ຈຶ່ງອອກຄຳແນະນຳ ດັ່ງນີ້:

### I. ຈຸດປະສົງລະດັບຄາດຂອງການດຳເນີນຊີວິດການເມືອງ.

1. ເພື່ອສຳຫຼວດກວດກາຕີລາຄາຄວາມຮັບຜິດຊອບລວມຂອງຄະນະບໍລິຫານງານພັກແຕ່ລະຂັ້ນ ແລະ ຄວາມຮັບຜິດຊອບຂອງກຳມະການຄະນະພັກແຕ່ລະສະຫາຍ ໂດຍມີການວິເຄາະໄຈ້ແຍກຢ່າງເລິກເຊິ່ງການເຄື່ອນໄຫວນຳພາຕົວຈິງ ເພື່ອໃຫ້ເຫັນອັນດີ-ຜົນງານ, ອັນອ່ອນ-ຄົງຄ້າງລວມ ຂອງຄະນະບໍລິຫານງານພັກແຕ່ລະຂັ້ນ, ຂອງບຸກຄົນຄະນະພັກ ໃນໄລຍະ 02 ປີກວ່າທີ່ຜ່ານມາ.

2. ອີງໃສ່ບັນຫາທີ່ຖອດຖອນໄດ້ຈາກຂໍ້ 1 ເປັນບ່ອນອີງໃຫ້ແກ່ການປັບປຸງແກ້ໄຂ, ສືບຕໍ່ກໍ່ສ້າງພັກໃຫ້ໜັກແໜ້ນທາງດ້ານການເມືອງ, ເອກະພາບທາງດ້ານແນວຄິດ, ເຂັ້ມແຂງທາງດ້ານການຈັດຕັ້ງ ແລະ ມີແບບແຜນນຳພາ-ວິທີເຮັດວຽກ ທີ່ຖືກຕ້ອງ ແລະ ເຂັ້ມງວດ; ອີກດ້ານໜຶ່ງ ແມ່ນເຮັດໃຫ້ບັນດາສະຫາຍຄະນະພັກທີ່ຍັງຫຼຸ່ມນ້ອຍປັບປຸງຕົນເອງໃຫ້ມີມາດຖານເງື່ອນໄຂຄົບຖ້ວນ ສືບຕໍ່ສະໝັກເຂົ້າໃນຄະນະພັກ ສະໄໝຕໍ່ໄປ.

3. ການດຳເນີນຊີວິດການເມືອງຄັ້ງນີ້ ແນໃສ່ກະຕຸ້ນໃຫ້ການຈັດຕັ້ງພັກ, ບຸກຄົນຄະນະພັກ ຍົກສູງຄວາມຮັບຜິດຊອບໃນການປະຕິບັດໜ້າທີ່ການເມືອງ, ປຸກລະດົມຂະບວນການສ້າງການຫັນປ່ຽນຢ່າງແຂງແຮງເລິກເຊິ່ງ ແລະຮອບດ້ານ ຕາມຈິດໃຈມະຕິກອງປະຊຸມໃຫຍ່ ຄັ້ງທີ XI ຂອງພັກ ຕິດພັນກັບການຍົກສູງຄວາມສາມາດໃນການນຳພາ, ຄວາມເປັນແບບຢ່າງນຳໜ້າ, ຄວາມສາມັກຄີເປັນເອກະພາບ, ຄວາມເປັນເຈົ້າການຕັ້ງໜ້າບຸກບືນເຮັດແທ້ທຳຈິງ ແລະ ຍົກສູງຄວາມຮັບຜິດຊອບຂອງຄະນະພັກແຕ່ລະຂັ້ນ ໃນການຄົ້ນຄວ້າ, ແກ້ໄຂບັນຫາຕ່າງໆຢູ່ຂະແໜງການ ແລະ ທ້ອງຖິ່ນຂອງຕົນ.

**II. ເນື້ອໃນເຈາະຈີ້ມສຳຫຼວດການນຳພາລວມຂອງຄະນະບໍລິຫານງານພັກ, ບຸກຄົນຄະນະພັກ.**

**2.1. ເນື້ອໃນສຳຫຼວດການນຳພາຂອງຄະນະບໍລິຫານງານພັກ.**

**ກ. ຕີລາຄາດ້ານດີ-ດ້ານອ່ອນ.**

1) ລົງເລິກຕີລາຄາຄວາມຮັບຜິດຊອບ ໃນການປະຕິບັດໜ້າທີ່ການເມືອງຂອງຄະນະພັກແຕ່ລະຂັ້ນ ຕໍ່ການນຳພາຄົ້ນຄວ້າເຊື່ອມຊຶມ, ຜັນຂະຫຍາຍ, ຈັດຕັ້ງປະຕິບັດມະຕິກອງປະຊຸມໃຫຍ່ ຄັ້ງທີ XI ຂອງພັກ ແລະ ມະຕິກອງປະຊຸມໃຫຍ່ອົງຄະນະພັກຂັ້ນຕົນ ໃນແຕ່ລະດ້ານ ເປັນຕົ້ນ: ວຽກງານປ້ອງກັນຊາດ-ປ້ອງກັນຄວາມສະຫງົບ, ວຽກງານພັດທະນາເສດຖະກິດ-ສັງຄົມ ຫຼື ການພັດທະນາຂະແໜງການ, ການປັບປຸງການຈັດຕັ້ງໃນລະບົບການເມືອງ, ການພົວພັນກັບຕ່າງປະເທດ, ການປັບປຸງກໍ່ສ້າງພັກ-ພະນັກງານທາງດ້ານການເມືອງ, ແນວຄິດ ແລະ ການຈັດຕັ້ງ ໂດຍຍົກໃຫ້ເຫັນດ້ານດີ, ດ້ານອ່ອນ, ບົດຮຽນທີ່ຖອດຖອນໄດ້ ແລະ ກຳນົດທິດທາງວິທີການແກ້ໄຂໃນຕໍ່ໜ້າ.

2) ຕີລາຄາແບບແຜນນຳພາ, ວິທີເຮັດວຽກ ແລະ ຄວາມສາມັກຄີພາຍໃນຄະນະພັກ ຄືດພັນກັບການປະຕິບັດຫຼັກການລວມສູນປະຊາທິປະໄຕ, ນຳພາເປັນໝູ່ຄະນະ, ບຸກຄົນຮັບຜິດຊອບ, ການປະຕິບັດລະບອບປະຊຸມປະຈຳເດືອນ, ໄຕມາດ, 06 ເດືອນ ແລະ ປະຈຳປີ; ການປະຕິບັດລະບອບຕຳນິຕິຊົມຕົນເອງ ແລະ ຕຳນິສິ່ງຂ່າວກໍ່ສ້າງຊ່ວຍເຫຼືອເຊິ່ງກັນ ແລະ ກັນພາຍໃນຄະນະພັກ, ລະບອບປະສານງານ ລະຫວ່າງຍົກສູງປະສິດທິພາບການນຳພາ-ຊີ້ນຳຂອງຄະນະພັກ ກັບການເພີ່ມທະວີຄວາມສັກສິດໃນການຄຸ້ມຄອງບໍລິຫານລັດດ້ວຍກົດໝາຍ ແລະ ເສີມຂະຫຍາຍສິດເປັນເຈົ້າຂອງມະຫາຊົນ, ລະບອບເຮັດວຽກຕາມຂັ້ນຕອນ, ມີແຜນການ, ມີການຕິດຕາມ-ກວດກາ, ສະຫຼຸບຖອດຖອນບົດຮຽນ, ສ່ອງແສງລາຍງານ ແລະ ການລົງຮາກຖານຕິດແທດກັບວຽກງານຕົວຈິງ.

**ຂ. ສະເໜີມາດຕະການ ແລະ ວິທີການແກ້ໄຂຈຸດອ່ອນ, ຂໍ້ຄົງຄ້າງໃນຕໍ່ໜ້າ.**

**2.2. ເນື້ອໃນເຈາະຈີ້ມເພື່ອສຳຫຼວດຕີລາຄາຕົນເອງ ຂອງບຸກຄົນຄະນະພັກ.**

**ກ. ຕີລາຄາດ້ານດີ-ດ້ານອ່ອນ.**

**1) ດ້ານຄຸນທາດການເມືອງ:**

- ທັດສະນະຫຼັກໝັ້ນການເມືອງ, ຫຼັກໝັ້ນຊຶບຊຶ້ນ, ຈຳແນກມິດ-ສັດຕູ, ມີຄວາມບໍລິສຸດປອດໃສທາງດ້ານການເມືອງ, ຈົງຮັກພັກດີຕໍ່ອຸດົມການ ຄຽງຄູ່ກັບຄວາມເປັນແບບຢ່າງນຳໜ້າໃນການແກ້ໄຂແນວຄິດຄອງເດີມ, ກ້າປ່ຽນແປງພັດທະນາຕົນເອງຕາມມາດຖານຂອງຜູ້ນຳພາ, ສອດຄ່ອງກັບແນວທາງປ່ຽນແປງໃໝ່ຂອງພັກ ສະແດງອອກຄືແນວໃດ?.

- ການຕ້ານແນວຄິດຫຼາຍພັກຫຼາຍເຄົ້າ, ມີສະຕິ ແລະ ເປັນເຈົ້າການຕ້ານກົນອຸບາຍຫັນປ່ຽນໂດຍສັນຕິຂອງສັດຕູ, ການຕໍ່ສູ້ເພື່ອສະກັດກັ້ນ ແລະ ແກ້ໄຂພະຍາດອາດຍາສິດ, ເອກະຊົນ, ຕ້ານບັນດາພຶດຕິກຳທີ່ເປັນການສໍ້ລາດບັງຫຼວງ, ປະກົດການຫຍໍ້ທໍ້ຕ່າງໆພາຍໃນພັກ ແລະ ໃນສັງຄົມ ເວົ້າລວມ, ໃນຂະແໜງການ ແລະ ທ້ອງຖິ່ນຂອງຕົນຮັບຜິດຊອບ ເວົ້າສະເພາະ ໃນໄລຍະຜ່ານມາມີອັນພົ້ນເດັ່ນຫຍັງແດ່; ຄວາມເຊື່ອໝັ້ນໄວ້ວາງໃຈຈາກສະມາຊິກພັກ, ພະນັກງານ, ມະຫາຊົນ ແລະ ປະຊາຊົນບັນດາເຜົ່າມີຄືແນວໃດ?.

**2) ຄຸນສົມບັດສິນທຳປະຕິວັດ ແລະ ແບບແຜນດຳລົງຊີວິດ:**

- ດ້ານຄຸນສົມບັດສິນທຳປະຕິວັດ: ຄວາມສັດຊື່ບໍລິສຸດ, ນ້ຳໃຈເສຍສະຫຼະເພື່ອປະເທດຊາດ ແລະ ປະຊາຊົນ, ຄວາມເປັນແບບຢ່າງນຳໜ້າໃນການນຳພາ, ການທຸ້ມເທເຫື່ອແຮງສະຕິປັນຍາ ແລະ ການເສຍສະຫຼະ ເພື່ອອັນລວມ, ກ້າຮັບ ແລະ ກ້າປັບປຸງແກ້ໄຂຈຸດອ່ອນ ຄືແນວໃດ? ການປົກປັກຮັກສາຄວາມສາມັກຄີພາຍໃນພັກ, ສາມັກຄີບັນດາເຜົ່າ,

ທັດສະນະມະຫາຊົນ; ຄວາມເປັນເຈົ້າການໃນການຄົ້ນຄວ້າຮ່ຳຮຽນຝຶກຝົນຫຼໍ່ຫຼອມຕົນເອງແຕ່ລະດ້ານ; ສະຕິເຄົາລົບ ແລະ ປະຕິບັດກົດລະບຽບຂອງພັກ, ກົດໝາຍ ແລະ ລະບຽບການຕ່າງໆຂອງລັດ ເປັນຕົ້ນ: ຂໍ້ຫ້າມສຳລັບສະມາຊິກພັກ, ກົດໝາຍວ່າດ້ວຍພະນັກງານ-ລັດຖະກອນ, ກົດໝາຍວ່າດ້ວຍການຕ້ານການສໍ້ລາດບັງຫຼວງ, ກົດໝາຍ ແລະ ລະບຽບການຕ່າງໆຂອງລັດ.

- ດ້ານແບບແຜນການດຳລົງຊີວິດ: ຕີລາຄາຜົນການສ້າງແບບແຜນດຳລົງຊີວິດທີ່ປອດໃສ, ອົດທົນ ແລະ ປະຕິບັດການປະຢັດມັດທະຍັດ, ລຽບງ່າຍ, ເຮັດແທ້ທຳຈິງ, ທັດສະນະ ແລະ ຄວາມເປັນແບບຢ່າງທີ່ດີໃຫ້ແກ່ຂັ້ນລຸ່ມ, ມະຫາຊົນ, ການສຶກສາອົບຮົມຄອບຄົວ, ພີ່ນ້ອງ ແລະ ການພົວພັນໃນສັງຄົມ, ສະພາບທາງສຽງ ແລະ ຄວາມສັດທາຈາກມະຫາຊົນ-ສັງຄົມຕໍ່ຕົນເອງ ມີຄືແນວໃດ ?.

3) ຄວາມຮັບຜິດຊອບຕໍ່ໜ້າທີ່ການເມືອງທີ່ໄດ້ຮັບມອບໝາຍ:

- ຄວາມເປັນເຈົ້າການໃນການຄິດ, ການຕັດສິນໃຈ ແລະ ກ້າເຮັດ, ກ້າຮັບຜິດຊອບຕໍ່ຜົນໄດ້-ຜົນເສຍຂອງວຽກງານທີ່ຕົນໄດ້ຮັບມອບໝາຍ ສະແດງອອກຕົວຈິງຄືແນວໃດ?.

- ຄວາມເຂົ້າໃຈຂອງຕົນເອງ ກ່ຽວກັບການສ້າງການຫັນປ່ຽນຢ່າງແຂງແຮງ, ເລິກເຊິ່ງ ແລະ ຮອບດ້ານ ຕາມຈິດໃຈຊີ້ນຳຂອງມະຕິກອງປະຊຸມໃຫຍ່ ຄັ້ງທີ XI ຂອງພັກ ໂດຍຍົກໃຫ້ເຫັນແຈ້ງບັນຫາໃນຂອບເຂດວຽກງານຕົນຮັບຜິດຊອບທີ່ຕ້ອງແກ້ໄຂ ເພື່ອສ້າງການຫັນປ່ຽນ.

- ຄວາມສາມາດເຂົ້າເຖິງຂໍ້ມູນຂ່າວສານໃໝ່ທີ່ເປັນປະໂຫຍດໃນວຽກງານ ແລະ ຍົກລະດັບຈິນຕະນາການ, ທິດສະກີ, ຄົ້ນຄວ້າ, ວິໄຈບັນຫາ, ກຳແໜ້ນສະພາບການ ແລະ ວຽກງານທີ່ຕົນຮັບຜິດຊອບ ເພື່ອປັບປຸງຄຸນນະພາບການນຳພາປະຕິບັດວຽກງານຕົວຈິງເປັນແນວໃດ?.

- ຄວາມສາມາດໃນການລິເລີ່ມແນວຄວາມຄິດໃໝ່, ການປະດິດສ້າງວິທີນຳພາ-ຊີ້ນຳ ແລະ ໝາກຜົນຕົວຈິງໃນການຈັດຕັ້ງປະຕິບັດວຽກງານ ທີ່ຕົນເອງໄດ້ຮັບມອບໝາຍນັບແຕ່ກອງປະຊຸມໃຫຍ່ຂັ້ນຕົ້ນ ມາຮອດປະຈຸບັນ.

4) ດ້ານແບບແຜນນຳພາ ແລະ ວິທີເຮັດວຽກ:

- ການສ້າງ ແລະ ປະຕິບັດແຜນດຳເນີນງານ, ການຈັດບູລິມະສິດໃນການແກ້ໄຂວຽກງານແຕ່ລະໄລຍະ ມີຈຸດສຸມ ແລະ ດຳເນີນການໃຫ້ເປັນລະບົບ ສະແດງອອກຄືແນວໃດ? ການກຳນົດ ແລະ ປະຕິບັດລະບອບການແບ່ງງານ, ແບ່ງຄວາມຮັບຜິດຊອບຢູ່ພາຍໃນຄະນະພັກ ໄດ້ເຮັດຄືແນວໃດ?.

- ຄວາມເປັນເອກະພາບທາງດ້ານແນວຄິດ ແລະ ການກະທຳ; ການປະຕິບັດຫຼັກການລວມສູນປະຊາທິປະໄຕ ໂດຍຕິດພັນກັບການກຳນົດເນື້ອໃນ ເພື່ອປຶກສາຫາລື ແລະ ຕົກລົງເປັນໝູ່ຄະນະ ພ້ອມທັງສະຕິເຄົາລົບ ແລະ ປະຕິບັດຕາມມະຕິໄດ້ເຮັດຄືແນວໃດ?.

- ການໃກ້ຊິດ ແລະ ຮັບພິຈາລະນາຄຳເຫັນຈາກມະຫາຊົນ, ກຳສະພາບລວມ ແລະ ເຂົ້າໃຈຄວາມເປັນຈິງຢູ່ຮາກຖານ ເພື່ອຄົ້ນຄວ້າແກ້ໄຂໃຫ້ຖືກຕ້ອງ ແລະ ສອດຄ່ອງກັບສະພາບຕົວຈິງ ຄືແນວໃດ?.

- ການປະຕິບັດລະບອບ ແຈ້ງຂ່າວຊີ້ນຳຕໍ່ຂັ້ນລຸ່ມ ແລະ ລາຍງານຂໍຄຳເຫັນຊີ້ນຳຈາກຂັ້ນເທິງ; ການປະຕິບັດການຕິດຕາມ, ຊຸກຍູ້, ກວດກາປະເມີນຜົນ, ຖອດຖອນບົດຮຽນ ແລະ ປັບປຸງແກ້ໄຂບັນຫາທີ່ເກີດຂຶ້ນໃນຄວາມຮັບຜິດຊອບຂອງຕົນ ຄືແນວໃດ?.

5) ລາຍງານຄວາມເປັນຈິງດ້ານສຸຂະພາບ, ການປະຕິບັດລະບອບຮັກສາສຸຂະພາບ ແລະ ປ້ອງກັນພະຍາດ.



CamScanner

ຂ. ລາຍງານ ແລະ ພິຈາລະນາຕໍ່ຄຳຕຳນິສິ່ງຂ່າວ.

- ຄຳເຫັນຕິຊົມຈາກໜ່ວຍພັກທີ່ຕົນຮ່ວມຊີວິດພັກ.

- ຄຳເຫັນຂອງໝູ່ຄະນະໃນຄະນະບໍລິຫານງານພັກຂັ້ນຕົນ.

- ພິຈາລະນາ ແລະ ຊີ້ແຈງຕໍ່ຄຳເຫັນຕຳນິສິ່ງຂ່າວຂອງພະນັກງານຫຼັກແຫຼ່ງ, ສະມາຊິກພັກທີ່ມີຕໍ່ຕົນເອງ ໂດຍຜ່ານການຫາບທາມຄວາມໄວ້ວາງໃຈຕໍ່ບຸກຄົນຄະນະພັກຂັ້ນຕົນ ຫຼື ຂໍ້ມູນທາງສາຍຕ່າງໆທີ່ການຈັດຕັ້ງ ແລະບຸກຄົນກ່ຽວຂ້ອງສະໜອງໃຫ້.

ຄ. ການຈັດປະເພດຕົນເອງ.

- ຈາກຈຸດດີ-ຜົນງານ ແລະ ຈຸດອ່ອນ-ຄົງຄ້າງແຕ່ລະດ້ານ ກໍຄືການຊັ່ງຊາຜົນໄດ້-ຜົນເສຍຕົວຈິງໃນການເຄື່ອນໄຫວວຽກງານຜ່ານມາ ເພື່ອຈັດປະເພດຕົນເອງໃຫ້ຖືກຕ້ອງ ແລະ ດ້ວຍຄວາມຈິງໃຈ.

- ແຈ້ງການຈັດປະເພດຈາກການຈັດຕັ້ງທີ່ຕົນສັງກັດ.

ງ. ມາດຕະການ ແລະ ວິທີການແກ້ໄຂຈຸດອ່ອນ ເພື່ອປັບປຸງພຶດຕິກຳຕົນເອງໃນຕໍ່ໜ້າ.

- ການແກ້ໄຂຈຸດອ່ອນ-ຄົງຄ້າງທີ່ຕົນເອງຍົກຂຶ້ນໃນເວລາຕິລາຄາຕົນເອງ ຫຼື ຈາກຄຳເຫັນອັນຖືກຕ້ອງຂອງໜ່ວຍພັກ, ຄະນະພັກ.

- ວາງຄາດໝາຍສູ້ຊົນ ແລະ ວິທີຈັດຕັ້ງປະຕິບັດພຶດຕິກຳຕົນເອງ ໃຫ້ມີຄວາມຮູ້-ຄວາມສາມາດນຳພາສູງຂຶ້ນກວ່າເກົ່າ ເພື່ອສ້າງຜົນສຳເລັດໃນການປະຕິບັດໜ້າທີ່ທີ່ໄດ້ຮັບມອບໝາຍ.

## III. ວິທີການຈັດຕັ້ງປະຕິບັດ.

1. ຄະນະບໍລິຫານງານພັກແຕ່ລະຂັ້ນ ຕ້ອງຈັດຕັ້ງການຄົ້ນຄວ້າເຊື່ອມຊຶມ, ກຳແໜ້ນຄຳແນະນຳສະບັບນີ້, ພ້ອມທັງຫັນເປັນອັນລະອຽດ ເພື່ອຈັດຕັ້ງປະຕິບັດໃຫ້ແທດເໝາະກັບຕົວຈິງຢູ່ແຕ່ລະກະຊວງ-ອົງການ ແລະ ທ້ອງຖິ່ນ.

2. ບົດສຳຫຼວດຕົນເອງ ຂອງບັນດາສະຫາຍຄະນະບໍລິຫານງານພັກ ທີ່ຈະນຳເຂົ້າໄປຜ່ານໃນບັ້ນດຳເນີນຊີວິດການເມືອງກາງສະໄໝ ຕ້ອງໄດ້ຜ່ານການປະກອບຄຳເຫັນຂອງບັນດາສະຫາຍສະມາຊິກພັກ ຢູ່ໜ່ວຍພັກທີ່ຕົນຮ່ວມຊີວິດພັກ ແລະ ຄຳເຫັນຂອງຄະນະບໍລິຫານງານພັກຂັ້ນເທິງ (ກະຊວງ-ອົງການ, ແຂວງ, ນະຄອນຫຼວງວຽງຈັນ, ເມືອງ ແລະນະຄອນ ທີ່ຕົນເປັນຄະນະບໍລິຫານງານພັກ) ໂດຍເລີ່ມແຕ່ສຳເລັດກອງປະຊຸມໃຫຍ່ຂັ້ນຕົນເປັນຕົ້ນມາ ຕາມເນື້ອໃນທີ່ໄດ້ກຳນົດຂ້າງເທິງນັ້ນ ແລະ ຍົກໃຫ້ເຫັນດ້ານດີ-ຜົນສຳເລັດ, ດ້ານອ່ອນ-ຂໍ້ຄົງຄ້າງ, ຈຳແນກໃຫ້ຈະແຈ້ງໃນຄວາມຮັບຜິດຊອບນຳພາ-ຊີ້ນຳຂອງຕົນຕໍ່ກັບຜົນໄດ້ ແລະ ຂໍ້ບົກຜ່ອງທີ່ເກີດຂຶ້ນໃນຂະແໜງການ ແລະ ທ້ອງຖິ່ນຂອງຕົນ, ຫຼີກເວັ້ນທັດສະນະຈື່ງຈຽນຂຽນແບບພະລຸ່ມພະລ້ວຍ, ຂາດຄວາມຮັບຜິດຊອບ, ບໍ່ສ່ອງແສງເຖິງຕົວຈິງ.

3. ບົດສຳຫຼວດຂອງແຕ່ລະສະຫາຍ ໃຫ້ເຮັດເປັນ 03 ສະບັບ, ມອບໃຫ້ຄະນະກວດກາພັກ ແລະ ຄະນະຈັດຕັ້ງຂັ້ນຕົນ ພາກສ່ວນລະ 01 ສະບັບ ເພື່ອສືບຕໍ່ຕິດຕາມ ແລະ ຕົນເອງຮັກສາໄວ້ 01 ສະບັບ.

4. ພາຍຫຼັງສຳເລັດບັ້ນດຳເນີນຊີວິດການເມືອງກາງສະໄໝແລ້ວ ໃຫ້ສະຫຼຸບຜົນຂອງການດຳເນີນຊີວິດການເມືອງ ແລະ ລາຍງານໃຫ້ຄະນະພັກ ແລະ ຄະນະກວດກາພັກຂັ້ນເທິງຖັດຕົນຊາບ.

ໃນເວລາຈັດຕັ້ງປະຕິບັດຕົວຈິງ ຫາກມີບັນຫາໃດບໍ່ຈະແຈ້ງໃຫ້ລາຍງານຂໍຄຳເຫັນ ຈາກຄະນະກວດກາສູນກາງພັກ ແລະ ຄະນະຈັດຕັ້ງສູນກາງພັກ ເພື່ອຈະໄດ້ສະເໜີຂໍການຊີ້ນຳຈາກຂັ້ນເທິງໃຫ້ທັນເວລາ.

ປະທານ ຄະນະກວດກາສູນກາງພັກ

ຄຳພັນ ພົມມະທັດ